# ໄຂ້ Q (Q FEVER)

## ໄຂ້ Q ຄືຫຍັງ?

ໄຂ້ Q ເປັນເຊື້ອໂຣກທີ່ແຜ່ລາມຈາກສັດຫາຄົນ. ມັນເກີດຈາກແບັກແທເລັຍເຊິ່ງສ່ວນຫລາຍຈະອາໄສຢູ່ໃນງົວຄວາຍ, ແກະ ແລະ ແບ້, ແລະ ຢູ່ໃນສັດປະເພດອື່ນໆ ແລະ ໃນສັດບ້ານ.

ສັດທີ່ມີເຊື້ອໂຣກນີ້ອາດຈະບໍ່ເຈັບປ່ວຍ. ແຕ່ຖ່າຍທອດແບັກແທເລັຍຜ່ານນ້ຳນົມ, ນ້ຳຍ່ຽວ, ອາຈົມ, ແລະ ນ້ຳຄ້ຳ. ໄຂ້ Q ທົນທານຕໍ່ຄວາມຮ້ອນ, ບ່ອນທີ່ແຫ້ງແລ້ງ, ແລະ ນ້ຳຢາຂ້າເຊື້ອໂຣກຫລາຍຢ່າງ.

## ໄຂ້ Q ເກີດຂຶ້ນເລື້ອຍປານໃດ?

ຄົນສ່ວນຫລາຍໄດ້ຮັບຜົນກະທົບໄວຈາກ ໄຂ້ Q ເພາະວ່າເຊື້ອໂຣກນີ້ມັນເກີດຂຶ້ນເປັນປະຈຳ ແຕ່ມັນບໍ່ມີການແຈ້ງໃຫ້ຮູ້ເລື້ອຍປານໃດເພາະຫລາຍໆກໍລະນີເຊື້ອໂຣກນີ້ບໍ່ເປັນອັນຕະລາຍ.

## ໄຂ້ Q ແຜ່ລາມແນວໃດ?

ໄຂ້ Q ອາດຈະແຜ່ລາມຕາມວິທີດັ່ງຕໍ່ໄປນີ້:

- ຫາຍໃຈເອົາແບັກແທເລັຍຈາກຂີ້ຝຸ່ນທີ່ມາຈາກບ່ອນໄວ້ເຟືອງທີ່ມີເຊື້ອໂຣກ
    - ລົມອາດຈະພັດມາເຄິ່ງໄມ ຫລື ຫລາຍກວ່ານັ້ນ
- ດື່ມນ້ຳນົມທີ່ມີເຊື້ອໂຣກ
- ຮາກ ແລະ ຫາຍໃຈເອົາອາຫານທີ່ມີເຊື້ອໂຣກ (ກໍລະນີນີ້ບໍ່ເກີດຂຶ້ນເລື້ອຍປານໃດ)

ການຕິດຕໍ່ເຊື້ອໂຣກ ໄຂ້ Q ຈາກຄົນໜຶ່ງຫາອີກຄົນໜຶ່ງຈະເກີດຂຶ້ນນ້ອຍທີ່ສຸດ.

## ອາການບາງຢ່າງທີ່ອາດເກີດຂຶ້ນມີຫຍັງແດ່?

ຄົນທີ່ມີ ໄຂ້ Q ບາງຄັ້ງອາດຈະບໍ່ຮູ້ສຶກຕົວ ຫລື ເຂົາເຈົ້າຄິດວ່າເປັນໄຂ້ຫວັດໃຫຍ່. ບາງຄົນມີອາການເກີດຂຶ້ນຢ່າງໄວ.

ລະຍະການຟັກໄຂ່ຂອງເຊື້ອໂຣກແບັກແທເລັຍຂອງ ໄຂ້ Q ມີລະຫວ່າງ 14 ຫາ 21 ມື້.
ອາການທົ່ວໆໄປອາດຈະມີ:

- ໄຂ້ຂຶ້ນສູງ
- ໜາວເຢືອກ ແລະ ເຫື່ອອອກ
- ເຈັບຫົວ ແລະ ເຈັບກ້າມເນື້ອ
- ເຈັບຄໍ
- ບໍ່ຫິວເຂົ້າ
- ໄອ
- ປຸ້ນທ້ອງປວດຮາກ ແລະ ຮາກ
- ລົງທ້ອງ
- ເຈັບທ້ອງ
- ເຈັບເອິກ

ບາງຄົນອາດຈະເປັນໂຣກປອດໄຄ່ ຫລື ໂຣກຕັບອັກເສບ. ຄົນສ່ວນຫລາຍຕັບຈະບໍ່ທຳງານເປັນປົກກະຕິ.

## ຈະກວດພົບ ໄຂ້ Q ໄດ້ແນວໃດ?

ໄຂ້ Q ຈະສາມາດກວດພົບໄດ້ໂດຍການກວດເລືອດ.

## ຈະຮັກສາ ໄຂ້ Q ໄດ້ດ້ວຍວິທີໃດ?

ສ່ວນຫລາຍແລ້ວຈະໃຊ້ຢາຂ້າເຊື້ອໂຣກຮັກສາ ໄຂ້ Q ແລະ ຄົນສ່ວນຫລາຍຈະເຊົາໄວ. ຜູ້ທີ່ບໍ່ຮັກສາຈະເຊົາພາຍໃນຫົກເຈັດເດືອນ.

## ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ໄຂ້ Q ໃຫ້ຕິດຕໍ່ໄປທີ່:

Ottawa County Health Department
www.miOttawa.org

Center for Disease Control and Prevention
www.bt.cdc.gov/agent/Qfever/
ເລກໂທຣະສັບ: (888) 246-2675

12251 James St., Suite 400
Holland, MI 49424
ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643
ແວບໄຊ: www.miOttawa.org